ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 209...../ສອສ.ອທອ

ວັນທີ...26/12/2017.

# ແຈ້ງການ

ເຖິງ: ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

ເລື່ອງ: ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ 6 ເດືອນຕົ້ນປີ 2018

- ອີງຕາມກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013.
- ອີງຕາມບົດບັນທຶກກອງປະຊຸມຂອງຄະນະບໍລິຫານງານ ສອສ ສະບັບເລກທີ 207/ສອສ,ລົງວັນທີ 25/12/2017.
- ອີງຕາມ ໃບແຈ້ງການ ຂອງກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ຕາມແຈ້ງການສະບັບເລກທີ 554/ກຄສງ,ລົງວັນທີ 13/12/2017 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນການຈ່າຍເງິນປັນຜົນໃຫ້ສະມາຊິກ.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ, ສາຂາ ອທອ ປະຈຳແຂວງເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການເພີ່ມ, ຫຼຸດ, ຖອນຮຸ້ນ ໃນງວດ 6 ເດືອນ ຕົ້ນປີ 2018 ດັ່ງນີ້ :

1. <u>ການປ່ຽນແປງຮຸ້ນ:</u>

1.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ທີ່ມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງວຽກ.

1.2 ການຖອກຮຸ້ນ: ຕໍ່າສຸດ 1 ຮຸ້ນ = 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ/ຄົນ/ເດືອນ.

1.3 ການຖອນຮຸ້ນ: ໃຫ້ສະມາຊິກຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ 10 ຮຸ້ນ =100,000 ກີບ.

1.4 ສະມາຊິກຜູ້ທີ່ມີຈຸດປະສົງຖອນຮຸ້ນ ຫຼື ເພີ່ມ/ຫຼຸດ ໃຫ້ປະກອບແບບຟອມ ສົ່ງໃຫ້ ທ່ານ ນ. ສີສຸພັນ ແກ້ວມະນີວົງ ຂາເຂົ້າ-ຂາອອກ ຂອງ ສອສ ຜ່ານລະບົບ Report ໃໝ່ພະແນກ ບໍລິຫານ, ເບີໂທ 22210090.

1.5 ກຳນົດເວລາຮັບຟອມ ເລີ່ມແຕ່ ວັນທີ 8-12/01/2018, ສະມາຊິກ ສອສ ສາມາດກວດຮຸ້ນສະສົມໄດ້ທີ່ທາງ Website : scc.etllao.com

1.6 ກຳນົດການຈ່າຍເງິນຖອນຮຸ້ນ ວັນທີ 24-26/01/2018.

1.7 ກໍລະນີພະນັກງານຂອງທ່ານຫາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນໄລຍະປະກາດການເພີ່ມ/ຫຼຸດ ແລະ ສະໝັກໃໝ່ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ. ຖ້າຊັກຊ້າຖືວ່າສະລະສິດ.

2. <u>ການກູ້ຢືມ:</u>

2.1 ກູ້ຢືມແບບປົກກະຕິ:

- ເງິນເດືອນຄ້ຳປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ, ດອກເບ້ຍ 1,56 % ຫລື 0,052% ໄລຍະເວລາ 18 ເດືອນ.
- ຫລັກຊັບ (ດິນ, ຮຸ້ນສະສົມ)ຄ້ຳປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ, , ດອກເບ້ຍ 1,56 % ຫລື 0,052%, ໄລຍະເວລາ 30 ເດືອນ.

2.2 ກູ້ຢືມແບບພິເສດ:

- ວົງເງິນສູງສຸດ 100 ລ້ານກີບ, ດອກເບັ້ຍ 1,7 % /ເດືອນ (ໄລຍະເວລາ 1 ປີ); ດອກເບັ້ຍ 1,8% /ເດືອນ (ໄລຍະເວລາ 2 ປີ).

2.3 ເງື່ອນໄຂເພີ້ມຕື່ມ:

- ການປັບປຸງການຄິດໄລ່ດອກເບ້ຍເງິນກູ້ຈາກເປັນເດືອນມາເປັນການຄິດໄລ່ດອກເບ້ຍເປັນວັນ.
- ຄ່າແບບຟອມກູ້ 10,000ກີບ/ສະບັບ,
- ຄ່າທຳນຽມ ປ່ຽນແປງຮຸ້ນ 5,000ກີບ/ສະບັບ.
- ຖ້າປ່ຽນສັນຍາໃໝ່ ແມ່ນຈະເສຍຄ່າທຳນຽມ 0,5% ຂອງມູນຄ່າສັນຍາ ໃນນັ້ນສັນຍາເກົ່າຕ້ອງ ປະຕິບັດການຊຳລະເກີນເຄິ່ງໜຶ່ງຂອງໄລຍະເວລາສັນຍາ ແລະ ມູນຄ່າເພີ້ມຕ້ອງ 20% ຂອງມູນຄ່າຂອງສັນຍາເກົ່າ.ສັນຍາໜຶ່ງອະນຸຍາດໃຫ້ປ່ຽນໃໝ່ໄດ້ພຽງຄັ້ງດຽວ.
- ປ່ຽນຄ່າປັບໃໝ 0,4% ຕໍ່ ວັນ ມາ ເປັນ 0,2 % ຕໍ່ວັນ ຂອງວົງເງິນທີ່ຄ້າງຊຳລະໃນສັນຍາ

3. <u>ການປັນຜົນງວດ 6 ເດືອນທ້າຍປີ 2017</u>

ສຳລັບການປັນຜົນ 6 ເດືອນທ້າຍປີ 2017 ແມ່ນຫຍັງລໍຖ້າການກວດກາຜົນປະກອບການຈາກ ກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປລາວ ຕາມແຈ້ງການ ສະບັບເລກທີ 554/ກຄສງ,ລົງວັນທີ 13/12/2017 ວ່າດ້ວຍການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນການຈ່າຍເງິນປັນຜົນໃຫ້ສະມາຊິກ.

4. <u>ວິທີຈັດຕັ້ງປະຕິບັດ:</u>

1. ການໂອນເງິນຖອນຮຸ້ນ, ຫລຸດຮຸ້ນ ຈະປະຕິບັດຕາມເລກບັນຊີ ທະນາຄານຂອງສະມາຊິກທີ່ໄດ້ແຈ້ງໃຫ້ ສອສ ຄື: ນະຄອນຫຼວງວຽງຈັນ, ສາຂາແຂວງແມ່ນໂອນຜ່ານເລກບັນຊີ ທະນາຄານ ພັດທະນາລາວ ຫຼື ການຄ້າຕ່າງປະເທດ ຫຼື ລາວຫວຽດ. ຫຼີກເວັ້ນການໂອນເຂົ້າບັນຊີຂອງຜູ້ອື່ນ ແລະ ບັນຊີຂອງທະນາຄານ ພົງສະຫວັນ ເພາະຈະໄດ້ເສຍຄ່າໂອນແຕ່ລະຄັ້ງ.
2. ສຳລັບ ສະມາຊິກໃໝ່ ໃຫ້ສົ່ງເລກບັນຊີທະນາຄານທີ່ອອກຊື່ຂອງຜູ້ກູ້ຽວມາດ້ວຍ

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຜູ້ອຳນວຍການ ສອສ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນອອມຊັບ-ສິນເຊື່ອ

ຈັນທະພອນ ບຸນສົມຫວັງ